ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ..01......./ນຍ

ນະຄອນຫຼວງວຽງຈັນ, ວັນທີ .6...1...2016

# ຂໍ້ຕົກລົງ
# ວ່າດ້ວຍການສ້າງຕັ້ງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ມະຕິຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ພະຈິກ 2014, ສະບັບເລກທີ 11/ລບ, ລົງວັນທີ 16 ທັນວາ 2014;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີວ່າການ ກະຊວງຍຸຕິທຳ, ສະບັບເລກທີ 973/ກຍ, ລົງວັນທີ 15 ຕຸລາ 2015.

## ນາຍົກລັດຖະມົນຕີ ຕົກລົງ:

### ມາດຕາ 1. ການສ້າງຕັ້ງ

ຂໍ້ຕົກລົງສະບັບນີ້ ກຳນົດການສ້າງຕັ້ງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ, ແນໃສ່ເສີມຂະຫຍາຍຄວາມສາມັກຄີປອງດອງ ລະຫວ່າງປະຊາຊົນບັນດາເຜົ່າຢູ່ພາຍໃນບ້ານ, ຫຼຸດຜ່ອນຄະດີຂຶ້ນໄປຫາສານ, ປະກອບສ່ວນເຂົ້າໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳໃນສັງຄົມ.

### ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ

ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ແມ່ນການຈັດຕັ້ງຍຸຕິທຳຮາກຖານ ທີ່ຂຶ້ນກັບໜ່ວຍງານບໍລິຫານ ແລະ ການປົກຄອງຂອງບ້ານ, ເຄື່ອນໄຫວວຽກງານພາຍໃຕ້ການຊີ້ນຳທາງດ້ານວິຊາການຂອງຫ້ອງການຍຸຕິທຳເມືອງ, ເທດສະບານ, ມີພາລະບົດບາດ ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນພາຍໃນບ້ານ.

### ມາດຕາ 3. ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ

ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ແມ່ນຜູ່ຊົງຄຸນວຸດທິ ຊຶ່ງໄດ້ຮັບການຄັດເລືອກຈາກປະຊາຊົນພາຍໃນບ້ານ ແລະ ຖືກແຕ່ງຕັ້ງໂດຍເຈົ້າເມືອງ, ຫົວໜ້າເທດສະບານ ຕາມການສະເໜີຂອງອົງການປົກຄອງບ້ານ ໂດຍຜ່ານຫ້ອງການຍຸຕິທຳເມືອງ, ເທດສະບານ.

### ມາດຕາ 4. ການຄຸ້ມຄອງ ແລະ ກວດກາ

ກະຊວງຍຸຕິທຳ ມີໜ້າທີ່ຄຸ້ມຄອງ ແລະ ກວດກາ ວຽກງານການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ.

**ມາດຕາ 5. ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງຍຸຕິທຳ ຄົ້ນຄວ້າ ອອກຂໍ້ຕົກລົງ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຸ່ມ ຂອງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ.

ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ ເອົາໃຈໃສ່ຊີ້ນຳ ນຳພາຂະແໜງການຍຸຕິທຳ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ໃຫ້ເປັນເຈົ້າການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 6. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງສິງ ທຳມະວົງ